ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
ຖະໜົນ: ກຳແພງເມືອງ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ ປ ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kampheangmueng Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ປີໂຕຣເທຣດ ຮ່ວມມອບເຄື່ອງໃຫ້ແກ່ ກອງຮ້ອຍທະຫານຊາຍແດນ 241

ໃນວັນພະຫັດ ທີ່ 30-3-2023 ທີ່ຜ່ານມາ ບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ແລະ ບໍລິສັດ ຂວັນໃຈ ການຄ້າ ຂາເຂົ້າ-ຂາອອກ ຈຳກັດ ຕາງໜ້າບໍລິສັດໂດຍ ທ່ານ ຄຳພຸດ ສົມບຸນ, ເລຂານຸການບໍລິສັດ ໄດ້ໄປ ມອບເຄື່ອງອຸປະໂພກ ແລະ ບໍລິໂພກ ແກ່ອ້າຍນ້ອງທະຫານ ກອງຮ້ອຍຊາຍແດນ 241 ເພື່ອແກ້ໄຂສະກັດກັ້ນ ໄພພິບັດໄຟໄໝ້ລາມປ່າຢູ່ຂອບເຂດພູພະນັງ ເມືອງສັງທອງ ນະຄອນຫຼວງວຽງຈັນ ໂດຍຕາງໜ້າຮັບໂດຍ ທ່ານ ພັນຕີ ບົວໄລ ໃບສະແຫວງ ຫົວໜ້າກອງຮ້ອຍທະຫານຊາຍແດນ 241 ທີ່ກອງບັນຊາການທະຫານນະຄອນຫຼວງ ວຽງຈັນ ລາຍລະອຽດລວມມີ: ຖັງເປ້ສີດນ້ຳ, ຜ້າ, ມີດ, ຄາດ, ນ້ຳດື່ມ ແລະ ເຄື່ອງບໍລິໂພກຈຳນວນໜຶ່ງ.

ລວມມູນຄ່າທັງໝົດ: 33,900,000 ກີບ






